DEPARTMENT OF HEALTH

# ການກວດເລືອດຫາ TB ແມ່ນຫຍັງ?

ການກວດເລືອດເພື່ອຫາເຊື້ອວັນນະໂລກ (TB), ຫຼື ເອີ້ນອີກຢ່າງໜຶ່ງວ່າ (interferon Gamma Release Assay) ຫຼື IGRA, ເປັນວິທີໜຶ່ງເພື່ອກວດວ່າທ່ານມີເຊື້ອພະຍາດວັນນະໂລກໃນຮ່າງກາຍຂອງທ່ານ ຫຼືບໍ່. ສາມາດກວດເລືອດດ້ວຍສອງແບບຄື QuantiFERON®-TB ແລະ T-SPOT®.TB.

## ທ່ານຄວນກວດຫາເຊື້ອວັນນະໂລກ ຖ້າວ່າ:

- ເຄີຍສຳພັດໃກ້ຊິດເປັນປະຈຳກັບຄົນທີ່ຍັງມີເຊື້ອວັນນະໂລກຢູ່ ,
- ອາໄສຢູ່ໃນຄາວຕີ້ທີ່ມີຫຼາຍຄົນເປັນວັນນະໂລກ,
- ເຮັດວຽກ ຫຼື ອາໄສຢູ່ໃນບ້ານພັກຟື້ນ, ຄລີນິກ, ໂຮງໝໍ, ຄຸກ ຫຼື ເຮືອນພັກຂອງຄົນບໍ່ມີບ້ານ,
- ຫຼື ລະບົບພູມຕ້ານທານຂອງທ່ານບໍ່ຄ່ອຍແຂງແຮງ.

ເດັກທີ່ມີອາຍຸໜ້ອຍກວ່າ 2 ປີຄວນຈະໄດ້ຮັບການກວດຫາເຊື້ອວັນນະໂລກຜ່ານທາງຜິວໜັງແທນການກວດເລືອດຫາເຊື້ອວັນນະໂລ.

## ຂ້ອຍສາມາດຮັບການກວດເລືອດຫາເຊື້ອວັນນະໂລກດ້ວຍວິທີໃດ?

ໃຫ້ສອບຖາມກັບຜູ້ໃຫ້ການບໍລິການດ້ານສຸຂະພາບຂອງທ່ານ. ພວກເຂົາຈະເຈາະເອົາເລືອດໜ້ອຍໜຶ່ງ ແລະ ສົ່ງໄປກວດທີ່ຫ້ອງທົດລອງ. ຜູ້ໃຫ້ການບໍລິການດູແລສຸຂະພາບຂອງທ່ານຄວນຈະແຈ້ງໃຫ້ທ່ານຊາບພາຍໃນສອງວັນວ່າຜົນກວດເປັນລົບ ຫຼື ບວກ.

## ຈະເປັນແນວໃດຖ້າວ່າຜົນກວດເຊື້ອວັນນະໂລກຂອງຂ້ອຍເປັນລົບ?

ຜົນກວດເລືອດເຊື້ອວັນນະໂລກມີຜົນເປັນລົບປົກກະຕິແລ້ວໝາຍຄວາມວ່າທ່ານບໍ່ມີເຊື້ອພະຍາດວັນນະໂລກໃນຮ່າງກາຍຂອງທ່ານ.

## ຈະເປັນແນວໃດຖ້າວ່າຜົນກວດເຊື້ອວັນນະໂລກຂອງຂ້ອຍເປັນບວກ?

ຜົນກວດເລືອດຫາເຊື້ອວັນນະໂລກມີຜົນເປັນບວກໝາຍເຖິງທ່ານອາດຈະມີເຊື້ອພະຍາດວັນນະໂລກຢູ່ໃນຮ່າງກາຍຂອງທ່ານ. ສ່ວນຫລາຍຄົນທີ່ມີຜົນກວດເລືອດເປັນບວກຈະມີການຕິດເຊື້ອວັນນະໂລກແຝງ. ເພື່ອໃຫ້ແນ່ໃຈ, ຜູ້ໃຫ້ບໍລິການດ້ານການປິ່ນປົວສຸຂະພາບຂອງທ່ານຈະກວດທ່ານ ແລະ ສ່ອງໄຟຟ້າໜ້າເອິກຂອງທ່ານ. ທ່ານຈຳເປັນຈະຕ້ອງໄດ້ຮັບການກວດອື່ນໆເພື່ອເບິ່ງວ່າທ່ານມີການຕິດເຊື້ອວັນນະໂລກແຝງ ຫຼື ກຳລັງຕິດເຊື້ອວັນນະໂລກຢູ່.

## ການຕິດເຊື້ອວັນນະໂລກແຝງແມ່ນຫຍັງ?

ມີສອງໄລຍະຂອງການຕິດເຊື້ອວັນນະໂລກ. ທັງສອງໄລຍະນີ້ສາມາດປິ່ນປົວໄດ້ດ້ວຍການໃສ່ຢາ.

ເມື່ອເຊື້ອພະຍາດວັນນະໂລກເຂົ້າໄປໃນຮ່າງກາຍຂອງທ່ານ, ພວກມັນຈະກໍ່ໃຫ້ເກີດມີການຕິດເຊື້ອພະຍາດວັນນະໂລກແຝງ. ຖ້າບໍ່ໄດ້ຮັບການປິ່ນປົວ, ການຕິດເຊື້ອວັນນະໂລກແຝງຈະກາຍມາເປັນການຕິດເຊື້ອວັນນະໂລກ.

| **ໄລຍະທີ 1 – ການຕິດເຊື້ອວັນນະໂລກແຝງ** | **ໄລຍະທີ 2 – ການຕິດເຊື້ອວັນນະໂລກ** |
|---|---|
| ເຊື້ອພະຍາດວັນນະໂລກຈະຢູ່ຊື່ໆ (**‘ນອນ’**) ໃນຮ່າງກາຍຂອງທ່ານ. ໄລຍະນີ້ຈະຢູ່ໄດ້ດົນ – ເປັນເວລາຫຼາຍປີ. | ກຳລັງຕິດເຊື້ອພະຍາດວັນນະໂລກ (‘ຕື່ນ’) ແລະ ກຳລັງແຜ່ກະຈາຍ. ພວກມັນກຳລັງທຳລາຍເນື້ອເຍື່ອໃນຮ່າງກາຍຂອງທ່ານ. |
| ທ່ານຈະບໍ່ເບິ່ງຄື ຫຼື ຮູ້ສຶກບໍ່ສະບາຍ. ການສ່ອງໄຟຟ້າຢູ່ໜ້າເອິກຂອງທ່ານ ໂດຍທົ່ວໄປແລ້ວແມ່ນປົກກະຕິ. | ໂດຍທົ່ວໄປແລ້ວ ທ່ານຈະຮູ້ສຶກບໍ່ສະບາຍ. ຜູ້ໃຫ້ບໍລິການປິ່ນປົວສຸຂະພາບຂອງທ່ານຈະກວດທ່ານພິເສດວ່າ ເຊື້ອພະຍາດວັນນະໂລກກຳລັງທຳລາຍຮ່າງກາຍຂອງທ່ານຢູ່ບ່ອນໃດ. |
| ທ່ານບໍ່ສາມາດແຜ່ເຊື້ອວັນນະໂລກໄປຫາຜູ້ອື່ນໄດ້. | ຖ້າວ່າເຊື້ອວັນນະໂລກໄດ້ເຂົ້າສູ່ປອດຂອງທ່ານ, ທ່ານສາມາດແຜ່ເຊື້ອພະຍາດວັນນະໂລກໃຫ້ກັບຄົນອື່ນໄດ້ໂດຍຜ່ານການໄອ, ຈາມ, ການເວົ້າ ຫຼື ການຮ້ອງເພັງ. |
| ໄດ້ຮັບການປິ່ນປົວໂດຍການໄດ້ຮັບຢາໜຶ່ງ ຫຼື ສອງຢ່າງ ເປັນເວລາສາມຫາສີ່ເດືອນ. | ໄດ້ຮັບການປິ່ນປົວດ້ວຍຢາສາມ ຫຼື ສີ່ຢ່າງ ເປັນເວລາຢ່າງໜ້ອຍຫົກເດືອນ. |

## ຈະເປັນແນວໃດຖ້າຂ້ອຍໄດ້ຮັບວັກຊີນ BCG?

ວັນຊີນ BCG (ວັກຊີນສໍາລັບພະຍາດວັນນະໂລກ) ຊ່ວຍປົກປ້ອງເດັກນ້ອຍຈາກການເຈັບປ່ວຍຂັ້ນຮຸນແຮງເນື່ອງຈາການຕິດເຊື້ອວັນນະໂລກ. ການປ້ອງກັນນີ້ຈະຫາຍໄປເອງເມື່ອຄົນມີອາຍຸແກ່ຂຶ້ນ.

ຄົນທີ່ໄດ້ຮັບວັກຊີນ BCG ຍັງຄົງສາມາດຕິດເຊື້ອວັນນະໂລກແຜງ ແລະ ເປັນພະຍາດວັນນະໂລກໄດ້.

ຖ້າທ່ານໄດ້ຮັບວັກຊີນ BCG ແລະ ທ່ານສາມາດກວດເລືອດເພື່ອຊອກຫາເຊື້ອພະຍາດວັນນະໂລກ ຫຼື ກວດທາງຜິວໜັງ, ມັນຈະເປັນການດີກວ່າຖ້າວ່າທ່ານເລືອກທີ່ຈະກວດຫາເຊື້ອຜ່ານການກວດເລືອດ. ນີ້ກໍເນື່ອງຈາກວ່າ ວັກຊີນ BCG ຈະບໍ່ສົ່ງຜົນກະທົບຕໍ່ການກວດຫາເຊື້ອຜ່ານການກວດເລືອດ. ນີ້ກໍໝາຍຄວາມວ່າ ການກວດເລືອດເພື່ອຊອກຫາເຊື້ອວັນນະໂລກຂອງທ່ານຈະເປັນບວກກໍ່ຕໍ່ເມື່ອ ທ່ານມີກໍາລັງມີເຊື້ອວັນນະໂລກໃນຮ່າງກາຍຂອງທ່ານເທົ່ານັ້ນ.

ປ້ອງກັນສຸຂະພາບຂອງທ່ານ ແລະ ສຸຂະພາບຂອງຄົນໃນຄອບຄົວຂອງທ່ານ – ໃຫ້ເຂົ້າຮັບການກວດເລືອດເພື່ອຫາເຊື້ອພະຍາດວັນນະໂລກ!

Minnesota Department of Health
Tuberculosis (TB) Prevention and Control
1-877-676-5414 or 651-201-5414
www.health.state.mn.us/tb

02/24

ເພື່ອຮັບຂໍ້ມູນນີ້ໃນຮູບແບບອື່ນ, *ກະລຸນາໂທຫາ: 651-201-5414.*